**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

ອົງການປະກັນສັງຄົມແຫ່ງຊາດ ເລກທີ 3581 /ອປຊ

ນະຄອນຫລວງວຽງຈັນ,ວັນທີ 18. 09. 2026

## ໜັງສືແຈ້ງເລື່ອນເຊີນປະມູນ

1. ອົງການປະກັນສັງຄົມແຫ່ງຊາດ ຂໍເຊີນບັນດາບໍລິສັດທີ່ສົນໃຈ ແລະ ມີຄຸນນະວຸດທິເໝາະສົມ ເຂົ້າຍື່ນຊອງປະມູນ ສໍາລັບສະໜອງ ອຸປະກອນເຄື່ອງໄອທີ ແລະ ອຸປະກອນເຄື່ອງໃຊ້ຫ້ອງການ ສໍາລັບການສະໜອງສິນຄ້າ ແມ່ນໄດ້ແບ່ງເປັນສອງພູດ ຄື:

   **ພູດທີ 01.1** : (ພາກໃຕ້ )ໂນດບຸກ, ຄອມພິວເຕີຕັ້ງໂຕະ, ຈັກພິມບັດ, ເຄື່ອງສະແກນ ແລະ ໝໍ້ເກັບໄຟ ໄລຍະການຈັດສົ່ງແມ່ນ 5-7 ວັນ.

   <u>**01.2**</u> : (ພາກເໜືອ )ໂນດບຸກ, ຄອມພິວເຕີຕັ້ງໂຕະ, ຈັກພິມບັດ, ເຄື່ອງສະແກນ ແລະ ໝໍ້ເກັບໄຟ ໄລຍະການຈັດສົ່ງແມ່ນ 5-7 ວັນ.

   <u>**ພູດທີ 02**</u> ໂຕະ, ຕັ່ງ ແລະ ຕູ້ເຫລັກໃສ່ເອກະສານ ໄລຍະການຈັດສົ່ງແມ່ນ ຊ້າສຸດບໍ່ໃຫ້ເກີນ 7-15 .
2. ການປະມູນຈະດໍາເນີນຕາມຂັ້ນຕອນການປະມູນເປີດກ້ວາງທີ່ໄດ້ກໍານົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄໍາແນະນໍາກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ການປະມູນນີ້ ອະນຸຍາດໃຫ້ທຸກໆບໍລິສັດທີ່ມີຄຸນນະວຸດທິເໝາະສົມ ແລະ ມີໃບອະນຸຍາດດໍາເນີນທຸລະກິດຖືກຕ້ອງຕາມກົດໝາຍທີ່ກ່ຽວພັນກັບການສະໜອງເຄື່ອງດັ່ງກ່າວ;
4. ບໍລິສັດໃດສົນໃຈ ສາມາດຊື້ເອກະສານປະມູນຄົບຊຸດໄດ້ທີ່ອົງການປະກັນສັງຄົມແຫ່ງຊາດ (ພະແນກ ທະບຽນ-ເງິນສົມທົບ) ຊັ້ນ 3 ຕັ້ງຢູ່ບ້ານ: ທົ່ງສາງນາງ, ເມືອງ: ຈັນທະບູລີ, ນະຄອນຫລວງວຽງຈັນ, ເບີໂທ 020 56654549. ຈະເລີ່ມຂາຍຊອງແຕ່ວັນທີ 12 ສິງຫາ 2026 ເປັນຕົ້ນໄປ, ຊອງປະມູນ ພູດທີ 01: ລາຄາ 3,000,000 ກີບ/ຊອງ ແລະ ຊອງປະມູນ ພູດທີ 02: 1,500,000 ກີບ/ຊອງ ຈໍານວນເງິນດັ່ງກ່າວຈະບໍ່ສົ່ງຄືນຖ້າບໍລິສັດຂອງທ່ານບໍ່ຊະນະການປະມູນ ແລະ ວິທີການຊໍາລະຕ້ອງຈ່າຍເປັນເງິນສົດ.
5. <u>**ຊອງປະມູນ ພູດທີ 01:**</u> ຕ້ອງສົ່ງກ່ອນເວລາ 9:00 ໂມງ ເລື່ອນຈາກວັນທີ 18 ກັນຍາ 2026 ມາເປັນວັນທີ 05 ຕຸລາ 2026. ຊອງປະມູນທຸກໆຊອງແມ່ນຈະປິດຮັບ ແລະ ເປີດຊອງໃນເວລາ 9:00 ໂມງ, ຂອງວັນທີ 05 ຕຸລາ 2026;
6. <u>**ຊອງປະມູນ ພູດທີ 02:**</u> ຕ້ອງສົ່ງກ່ອນເວລາ 9:30 ໂມງ ເລື່ອນຈາກວັນທີ 18 ກັນຍາ 2026 ມາເປັນວັນທີ 05 ຕຸລາ 2026. ຊອງປະມູນທຸກໆຊອງແມ່ນຈະປິດຮັບ ແລະ ເປີດຊອງໃນເວລາ 9:30 ໂມງ, ຊອງປະມູນໃດທີ່ສົ່ງຊ້າກວ່າກໍານົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ, ຊອງປະມູນທັງສອງພູດແມ່ນຈະເປີດຊອງຂຶ້ນໃນວັນທີ 05 ຕຸລາ 2026 ທີ່ຫ້ອງປະຊຸມຊັ້ນ 2 ຂອງອົງການປະກັນສັງຄົມແຫ່ງຊາດ ໂດຍຊ່ອງໜ້າຄະນະກໍາມະການປະມູນ ແລະ ຕົວແທນຂອງຜູ້ປະມູນ;
7. ທຸກໆຊອງປະມູນຕ້ອງປະກອບການຄໍ້າປະກັນການປະມູນ ດ້ວຍເງິນສົດ ຫລື ໜັງສືຄໍ້າປະກັນອອກໂດຍທະນາຄານ, ແລ້ວ ບໍ່ໃຫ້ຫລຸດ 02% (ສອງສ່ວນຮ້ອຍ) ຂອງມູນຄ່າສະເໜີ.

ຫົວໜ້າອົງການ

ອົງການປະກັນສັງຄົມແຫ່ງຊາດ

**ພົດສະໝອນ ສຸກທະວິພອນ**